ປຶດຂ່າວປະຈຳເດືອນ
ມີນາ 2026 -  ມິຖຸນາ 2026



# SuPER WE Coffee

## ວຽກເດັ່ນຂອງໂຄງການ
## ມີນາ 2026 - ມິຖຸນາ 2026

**ມີນາ:** ຄະນະຜູ້ແທນສະຫະພາບເອີຣົບ ໄດ້ລົງຢ້ຽມຢາມໂຄງການ SuPER WE ທີ່ແຂວງເຊກອງ ແລະ ໄດ້ເປີດຕົວສະຫະກອນກາເຟພູດອຍດາກຈຶງຢ່າງເປັນທາງການ.

**ເມສາ:** ໂຄງການໄດ້ຈັດງານເສວະນາກາເຟລາວ ປະຈຳປີ 2026 ທີ່ນະຄອນປາກເຊ ເພື່ອສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງຜູ້ຜະລິດກາເຟ.

**ພຶດສະພາ:** ສະຫະກອນກາເຟພູດອຍດາກຈຶງ ໄດ້ນຳເອົາຜະລິດຕະພັນກາເຟລາວກ້າວສູ່ສາກົນ ໂດຍການເຂົ້າຮ່ວມງານວາງສະແດງກາເຟໂລກ (World of Coffee 2026) ທີ່ບາງກອກ, ປະເທດໄທ.

**ມິຖຸນາ:** ໂຄງການ SuPER-WE ໄດ້ຈັດກອງປະຊຸມປິດໂຄງການຢ່າງເປັນທາງການ ພ້ອມທັງມອບ-ຮັບຊັບສິນ ແລະ ຄວາມຮັບຜິດຊອບໃຫ້ແກ່ສະຫະກອນດາກຈຶງ ເພື່ອສືບຕໍ່ພັດທະນາຢ່າງຍືນຍົງ.

## ຜູ້ທີ່ໄດ້ຮັບຜົນປະໂຫຍດ

ທາງກົງ

**400** ຊາວສວນກາເຟ
**280** ແມ່ຍິງຊົນເຜົ່າ

ທາງອ້ອມ

**4,463** ປະຊາຊົນ
**2,217** ແມ່ຍິງຊົນເຜົ່າ

## ປະຫວັດຄວາມເປັນມາ

ໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບ ຕ່ອງໂສ້ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໃນແຂວງ ເຊກອງ ຈະໄດ້ສ້າງຄວາມອາດສາມາດ ໃຫ້ຊາວສວນກາເຟ ສາມາດຍົກສະມັດຕະພາບ ການຜະລິດກາເຟໃຫ້ໄດ້ຜົນຜະລິດສູງ ແລະ ມີຄຸນະພາບ ແລະ ເພີ່ມລາຍຮັບໃນຄອບຄົວໃຫ້ສູງຂຶ້ນ ໂດຍຜ່ານການສະໜັບສະໜູນສ້າງຕັ້ງ ສູນແປຮູບກາເຟ, ສະໜອງເຕັກນິກການປູກ ແລະ ການແປຮູບໃຫ້ແກ່ກຸ່ມຜະລິດ, ສະໜອງອຸປະກອນທີ່ຈຳເປັນໃນການປູກ ແລະ ແປຮູບກາເຟ. ຈຸດປະສົງຂອງໂຄງການແມ່ນເພື່ອ ສະໜັບສະໜູນການພັດທະນາເສດຖະກິດ ທີ່ເປັນມິດກັບສິ່ງແວດລ້ອມ, ເພີ່ມທະວີການຮ່ວມມືກັບໜ່ວຍງານສະຫະກອນ ເຊັ່ນດຽວກັນກັບການສ້າງຄວາມ ສາມາດໃຫ້ແກ່ແມ່ຍິງຜູ້ຜະລິດກາເຟໂດຍເຊື່ອມໂຍງການຮ່ວມມື ວຽກງານບົດບາດທາງເພດ, ການເປັນຜູ້ນຳ ແລະ ຜູ້ປະກອບການ.

## ທີ່ຕັ້ງໂຄງການ







## ມີນາ

### ຄະນະຜູ້ແທນສະຫະພາບເອີຣົບ ລົງຢ້ຽມຢາມ ໂຄງການ SuPER WE ທີ່ ເມືອງດາກຈຶງ ແຂວງເຊກອງ

ໃນລະຫວ່າງວັນທີ 2-5 ມີນາ 2026, ຄະນະຜູ້ແທນຈາກສະຫະພາບເອີຣົບ (EU) ໄດ້ລົງຢ້ຽມຢາມໂຄງການ SuPER WE ໂດຍມີການເຂົ້າຮ່ວມຈາກຫຼາຍພາກສ່ວນ ເຊັ່ນ: ອົງການແຄຣ໌ ນານາຊາດ ປະຈໍາ ສປປ ລາວ, ຄູ່ຮ່ວມງານພາກລັດຂັ້ນກະຊວງ, ຂັ້ນແຂວງ, ຂັ້ນເມືອງ ແລະ ຜູ້ຕາງໜ້າຈາກ 15 ບ້ານເປົ້າໝາຍ.

ຈຸດປະສົງຂອງການຢ້ຽມຢາມຄັ້ງນີ້ ແມ່ນເພື່ອເພີ່ມທະວີການຮ່ວມມືລະຫວ່າງ ສະຫະພາບເອີຣົບ, ອົງການແຄຣ໌ ນານາຊາດ ປະຈໍາ ສປປ ລາວ, ພາກລັດຖະບານທຸກຂັ້ນ ແລະ ສະຫະກອນກາເຟພູດອຍດາກຈຶງໃນເມືອງດາກຈຶງ, ແຂວງເຊກອງ. ພ້ອມດຽວກັນນັ້ນ, ຍັງໄດ້ຮັບຟັງຄໍາແນະນໍາຈາກຄະນະຜູ້ແທນ ເພື່ອຮັບປະກັນໃຫ້ໂຄງການສາມາດບັນລຸເປົ້າໝາຍທີ່ວາງໄວ້ຢ່າງເຕັມຮູບແບບ.

ການລົງຢ້ຽມຢາມໄດ້ກວມເອົາ 3 ບ້ານເປົ້າໝາຍ ຄື: ບ້ານດາກຢອຍ, ບ້ານຄູນໄຊ ແລະ ບ້ານດາກວໍ ເພື່ອສັງເກດການດໍາລົງຊີວິດຂອງຊຸມຊົນ ແລະ ຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດກິດຈະກໍາໂຄງການໃນໄລຍະຜ່ານມາ.

ໃນມື້ສຸດທ້າຍຂອງການຢ້ຽມຢາມ, ຄະນະຜູ້ແທນຈາກສະຫະພາບເອີຣົບ, ອົງການແຄຣ໌ ນານາຊາດ ປະຈໍາ ສປປ ລາວ ພ້ອມດ້ວຍຄູ່ຮ່ວມງານພາກລັດ ແລະ ຜູ້ຕາງໜ້າ15 ບ້ານເປົ້າໝາຍຂອງໂຄງການ ໄດ້ຮ່ວມກັນຈັດພິທີເປີດຕົວ "ສະຫະກອນກາເຟພູດອຍດາກຈຶງ" ຢ່າງເປັນທາງການ ຂຶ້ນທີ່ບ້ານດາກວໍ, ເມືອງດາກຈຶງ, ແຂວງເຊກອງ ໂດຍມີຜູ້ເຂົ້າຮ່ວມທັງໝົດ 89 ທ່ານ (ໃນນັ້ນມີແມ່ຍິງ 33 ທ່ານ).



switchasia · Haliéus · 4FORM · COOP International Cooperative Alliance Asia and Pacific · ITC · FAIRTRADE





ມີນາ

## ການຝຶກອົບຮົມວຽກງານການຄຸ້ມຄອງບໍລິຫານ ແລະ ການບັນຊີ ໃຫ້ແກ່ສະຫະກອນກາເຟພູດອຍດາກຈຶງ

ໃນລະຫວ່າງວັນທີ 9-15 ມີນາ 2026, ໂຄງການ SuPER WE ໄດ້ຮ່ວມມືກັບ ກົມສົ່ງເສີມກະສິກຳ ແລະ ສະຫະກອນ ຈັດຝຶກອົບຮົມໃນຫົວຂໍ້ "ການຄຸ້ມຄອງບໍລິຫານ ແລະ ການບັນຊີສະຫະກອນ" ໃຫ້ແກ່ຄູ່ຮ່ວມງານພາກລັດຂັ້ນແຂວງ, ຂັ້ນເມືອງ ແລະ ຜູ້ຕາງໜ້າສະຫະກອນກາເຟພູດອຍດາກຈຶງ ຈາກບັນດາກຸ່ມບ້ານເປົ້າໝາຍ.

ຈຸດປະສົງຫຼັກຂອງການຝຶກອົບຮົມໃນຄັ້ງນີ້ ແມ່ນເພື່ອພັດທະນາຄວາມຮູ້ ແລະ ທັກສະຂອງຄະນະບໍລິຫານງານ ລວມເຖິງພະນັກງານສະຫະກອນໃນດ້ານການຄຸ້ມຄອງບໍລິຫານ ແລະ ການບັນຊີ. ການຝຶກອົບຮົມໄດ້ຈັດຂຶ້ນທີ່ ສູນໄອທີຊີ (ITC) ໂຮງຮຽນ ມ.ສ ເມືອງດາກຈຶງ, ໂດຍມີຜູ້ເຂົ້າຮ່ວມທັງໝົດ 31 ທ່ານ (ໃນນັ້ນມີແມ່ຍິງ 13 ທ່ານ).

ຕະຫຼອດໄລຍະການຝຶກອົບຮົມ, ຜູ້ເຂົ້າຮ່ວມໄດ້ຮຽນຮູ້ຫຼາຍຫົວຂໍ້ທີ່ສຳຄັນ ເພື່ອນຳໄປຈັດຕັ້ງປະຕິບັດຕົວຈິງ ໃນການບໍລິຫານວຽກງານຂອງສະຫະກອນກາເຟພູດອຍດາກຈຶງ ໃຫ້ມີປະສິດທິພາບ. ໃນຕອນທ້າຍຂອງພິທີ, ຕາງໜ້າຈາກກົມສົ່ງເສີມກະສິກຳ ແລະ ສະຫະກອນ ຍັງໄດ້ມອບໃບຍັ້ງຢືນໃຫ້ແກ່ຜູ້ເຂົ້າຮ່ວມ ເພື່ອເປັນກຳລັງໃຈ ແລະ ຍັ້ງຢືນເຖິງຄວາມຮູ້ທີ່ຈະນຳໄປໝູນໃຊ້ໃຫ້ເກີດປະໂຫຍດສູງສຸດແກ່ສະຫະກອນຕໍ່ໄປ.







# ມີນາ

## ການລົງຕິດຕາມກິດຈະກຳ ຢູ່ ສູນຜະລິດກາເຟຂອງບັນດາບ້ານເປົ້າໝາຍ

ໃນລະຫວ່າງວັນທີ 6-24 ມີນາ 2026, ພະນັກງານໂຄງການ SuPER WE ພ້ອມດ້ວຍຄູ່ຮ່ວມງານພາກລັດຂັ້ນເມືອງ ໄດ້ລົງຕິດຕາມຄວາມຄືບໜ້າຂອງບັນດາກິດຈະກຳ ທີ່ທາງໂຄງການໄດ້ໃຫ້ການສະໜັບສະໜູນທາງດ້ານວັດຖຸອຸປະກອນແກ່ກຸ່ມບ້ານເປົ້າໝາຍໃນໄລຍະຜ່ານມາ.

ຈຸດປະສົງຫຼັກຂອງການລົງຕິດຕາມໃນຄັ້ງນີ້ ແມ່ນເພື່ອເກັບກຳຂໍ້ມູນ ສຳລັບການພິຈາລະນາສະໜັບສະໜູນອຸປະກອນເພີ່ມເຕີມ ໃຫ້ແກ່ສູນຜະລິດກາເຟທີ່ຕ້ອງການການປັບປຸງ (ເຊັ່ນ: ເຮືອນຕາກກາເຟ, ໂຮງອົບກາເຟ ແລະ ລະບົບບຳບັດນ້ຳເສຍ, ສາງເກັບມ້ຽນກາເຟ ແລະ ອຸປະກອນອື່ນໆທີ່ຈຳເປັນ ສຳລັບແຕ່ລະບ້ານເປົ້າໝາຍ).

ການລົງຕິດຕາມວຽກງານດັ່ງກ່າວ ໄດ້ກວມເອົາ 15 ບ້ານເປົ້າໝາຍຂອງໂຄງການ ໂດຍມີຜູ້ເຂົ້າຮ່ວມໃຫ້ຂໍ້ມູນທັງໝົດ 49 ທ່ານ (ໃນນັ້ນມີແມ່ຍິງ 31 ທ່ານ).





switchasia Haliéus 4FORM International Cooperative Alliance ITC FAIRTRADE





# ມີນາ

## ການຝຶກອົບຮົມວຽກງານການຈັດການ ແລະ ການບົວລະບັດຮັກສາຕົ້ນກາເຟ

ໃນລະຫວ່າງວັນທີ 18-27 ມີນາ 2026, ພະນັກງານໂຄງການ SuPER WE ຮ່ວມກັບຄູ່ຮ່ວມງານພາກລັດຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ລົງຈັດຝຶກອົບຮົມໃນຫົວຂໍ້ "ການຈັດການ ແລະ ການບົວລະບັດຮັກສາຕົ້ນກາເຟ" ໃຫ້ແກ່ 15 ບ້ານເປົ້າໝາຍຂອງໂຄງການ. ການຝຶກອົບຮົມດັ່ງກ່າວ ໃຫ້ກຽດເປັນປະທານໂດຍ ທ່ານ ບຸນຍືງ ຕຸຍກະໝານ, ຮອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ.

ຈຸດປະສົງຫຼັກຂອງການຝຶກອົບຮົມ ແມ່ນເພື່ອສ້າງຂີດຄວາມອາດສາມາດທາງດ້ານເຕັກນິກວິຊາການ ໃນການບົວລະບັດຮັກສາສວນກາເຟ ພ້ອມທັງຍົກໃຫ້ເຫັນເຖິງຜົນຮ້າຍຂອງການນຳໃຊ້ຢາເຄມີປາບສັດຕູພືດ. ການຝຶກອົບຮົມໄດ້ເນັ້ນໜັກການຮຽນຮູ້ທັງພາກທິດສະດີ ແລະ ການລົງມືປະຕິບັດຕົວຈິງ ເພື່ອໃຫ້ຊາວສວນກາເຟມີຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ສາມາດນຳເອົາບົດຮຽນໄປໝູນໃຊ້ເຂົ້າໃນສວນກາເຟຂອງເຂົາເຈົ້າໄດ້ຢ່າງມີປະສິດທິພາບ.







## ມີນາ

### ການວາງສະແດງຜະລິດຕະພັນກາເຟພູດອຍດາກຈຶງ ໃນງານບຸນຊ່ວງເຮືອປະເພນີເມືອງດາກຈຶງ ປະຈຳປີ 2026

ໃນລະຫວ່າງວັນທີ 28-31 ມີນາ 2026, ໂຄງການ SuPER WE ຮ່ວມກັບຄູ່ຮ່ວມງານພາກລັດ ພ້ອມດ້ວຍຜູ້ຕາງໜ້າສະຫະກອນກາເຟພູດອຍດາກຈຶງ ໄດ້ເຂົ້າຮ່ວມຕັ້ງບູດວາງສະແດງໃນງານບຸນຊ່ວງເຮືອປະເພນີຂອງເມືອງດາກຈຶງ ປະຈຳປີ 2026.

ການເຂົ້າຮ່ວມງານໃນຄັ້ງນີ້ ມີຈຸດປະສົງຫຼັກເພື່ອສົ່ງເສີມຜະລິດຕະພັນກາເຟພູດອຍດາກຈຶງ ແລະ ເຜີຍແຜ່ຂໍ້ມູນກ່ຽວກັບຮູບແບບການຜະລິດກາເຟອິນຊີຂອງ ສະຫະກອນກາເຟພູດອຍດາກຈຶງ ກິດຈະກຳນີ້ໄດ້ຊ່ວຍສ້າງຈຸດເດັ່ນໃຫ້ຜະລິດຕະພັນກາເຟທ້ອງຖິ່ນ ເປັນທີ່ຮັບຮູ້ໃນສັງຄົມ ແລະ ຊຸກຍູ້ການຕະຫຼາດໃຫ້ກະຈາຍສູ່ພາຍນອກໄດ້ຢ່າງກວ້າງຂວາງຫຼາຍຂຶ້ນ.

ສຳລັບຄະນະຮັບຜິດຊອບປະຈຳບູດວາງສະແດງຜະລິດຕະພັນກາເຟໃນຄັ້ງນີ້ ມີຜູ້ເຂົ້າຮ່ວມທັງໝົດ 11 ທ່ານ (ໃນນັ້ນມີແມ່ຍິງເຖິງ 9 ທ່ານ).







# ເມສາ

## ການຝຶກອົບຮົມທົບທວນ ການສ້າງຄວາມເຂັ້ມແຂງດ້ານຄວາມເປັນຜູ້ນໍາຍິງ ແລະ ການເຊື່ອມສານບົດບາດຍິງ-ຊາຍ

ໃນລະຫວ່າງວັນທີ 2-5 ເມສາ 2026, ພະນັກງານໂຄງການ SuPER WE ພ້ອມດ້ວຍ ສະຫະພັນແມ່ຍິງແຂວງເຊກອງ ໄດ້ຈັດຝຶກອົບຮົມທົບທວນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງໃນສະຫະກອນກາເຟພູດອຍດາກຈຶງໃນຫົວຂໍ້ "ຄວາມເປັນຜູ້ນໍາຍິງ ແລະ ການເຊື່ອມສານບົດບາດຍິງ-ຊາຍ ເຂົ້າໃນຂະບວນການພັດທະນາ". ກອງປະຊຸມຄັ້ງນີ້ ໃຫ້ກຽດເປັນປະທານໂດຍ ທ່ານ ນາງ ເພັດດາແກ້ວ ພົນສະລາດ, ຮອງປະທານສະຫະພັນແມ່ຍິງແຂວງເຊກອງ.

ການຝຶກອົບຮົມໄດ້ຈັດຂຶ້ນທີ່ຫ້ອງປະຊຸມສະໂມສອນປົກຄອງເມືອງດາກຈຶງ ໂດຍມີຜູ້ເຂົ້າຮ່ວມຈາກຫຼາຍພາກສ່ວນ ເຊັ່ນ: ສະຫະພັນແມ່ຍິງແຂວງ ແລະ ເມືອງ, ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງ, ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ, ພະນັກງານໂຄງການ ພ້ອມດ້ວຍຕົວແທນຈາກຂັ້ນບ້ານ (ນາຍບ້ານ ແລະ ປະທານສະຫະພັນແມ່ຍິງບ້ານ). ມີຜູ້ເຂົ້າຮ່ວມທັງໝົດ 48 ທ່ານ (ໃນນັ້ນມີແມ່ຍິງ 29 ທ່ານ).

ຈຸດປະສົງຫຼັກຂອງການຝຶກອົບຮົມໃນຄັ້ງນີ້ ແມ່ນເພື່ອສົ່ງເສີມການວາງແຜນນະໂຍບາຍ, ລະບຽບຫຼັກການ, ທັດສະນະຄະຕິທາງສັງຄົມ, ວັດທະນະທໍາ ແລະ ການປະຕິບັດທີ່ປາສະຈາກການຈໍາແນກທາງເພດ. ພ້ອມທັງຊຸກຍູ້ການນໍາໃຊ້ວິທີການແບບມີສ່ວນຮ່ວມຂອງທັງຍິງ ແລະ ຊາຍ ເຂົ້າໃນຂະບວນການພັດທະນາຊຸມຊົນ. ຜູ້ເຂົ້າຮ່ວມໄດ້ຮຽນຮູ້ຫຼາຍຫົວຂໍ້ທີ່ສໍາຄັນ ເພື່ອນໍາໄປໝູນໃຊ້ເຂົ້າໃນວຽກງານການພັດທະນາຄຸນນະພາບຊີວິດໃນບັນດາບ້ານເປົ້າໝາຍຂອງໂຄງການ ແນໃສ່ຮັບປະກັນໃຫ້ເກີດຄວາມສະເໝີພາບຍິງ-ຊາຍ ຢ່າງແທ້ຈິງ.







# ເມສາ

## ການຝຶກອົບຮົມວຽກງານການຕະຫຼາດ ສຳລັບສະຫະກອນກາເຟພູດອຍດາກຈຶງ



ໃນລະຫວ່າງວັນທີ 6-10 ເມສາ 2026, ທີມງານໂຄງການ SuPER WE ຮ່ວມກັບ ກົມສົ່ງເສີມກະສິກຳ ແລະ ສະຫະກອນ ໄດ້ຈັດຝຶກອົບຮົມໃນຫົວຂໍ້ "ການຕະຫຼາດ" ໃຫ້ແກ່ຄູ່ຮ່ວມງານພາກລັດຂັ້ນແຂວງ, ຂັ້ນເມືອງ ແລະ ຄະນະບໍລິຫານງານສະຫະກອນກາເຟພູດອຍດາກຈຶງ. ການຝຶກອົບຮົມໄດ້ຈັດຂຶ້ນທີ່ຫ້ອງປະຊຸມສູນໄອຊີທີ ໂຮງຮຽນ ມ.ສ ເມືອງດາກຈຶງ ໂດຍມີຜູ້ເຂົ້າຮ່ວມທັງໝົດ 28 ທ່ານ (ໃນນັ້ນມີແມ່ຍິງ 11 ທ່ານ).

ຈຸດປະສົງຫຼັກຂອງການຝຶກອົບຮົມ ແມ່ນເພື່ອເພີ່ມພູນຄວາມຮູ້ ແລະ ສ້າງຄວາມເຂົ້າໃຈດ້ານການຕະຫຼາດໃຫ້ແກ່ຄະນະບໍລິຫານສະຫະກອນ ພ້ອມທັງພັດທະນາທັກສະໃນການວາງແຜນການຕະຫຼາດຢ່າງເປັນລະບົບ.

ຜ່ານການຝຶກອົບຮົມ, ນັກສຳມະນາກອນໄດ້ຮຽນຮູ້ຫຼາຍຫົວຂໍ້ທີ່ສຳຄັນ ເພື່ອນຳໄປໝູນໃຊ້ເຂົ້າໃນວຽກງານການບໍລິຫານ ແລະ ການຕະຫຼາດຂອງສະຫະກອນກາເຟພູດອຍດາກຈຶງ ໃຫ້ເກີດປະໂຫຍດສູງສຸດ ແລະ ມີຄວາມຍືນຍົງໃນອະນາຄົດ.







# ເມສາ

## ການຝຶກອົບຮົມການຂົ້ວ, ການຊີງ ແລະ ການຊີມກາເຟ

ໃນລະຫວ່າງວັນທີ 2-6 ເມສາ 2026, ໂຄງການ SuPER WE ໄດ້ຮ່ວມກັບຄູຝຶກຈາກ ບໍລິສັດ ໂຢຣຸ ຄອບຟີ (Yrou Coffee) ຈັດຝຶກອົບຮົມໃນຫົວຂໍ້: ການຂົ້ວ, ການຊີງ ແລະ ການຊີມກາເຟ. ຜູ້ເຂົ້າຮ່ວມປະກອບມີພະນັກງານພາກລັດຂັ້ນແຂວງ, ຂັ້ນເມືອງ ແລະ ຫົວໜ້າສູນອີ້ວກາເຟ ຈາກ 15 ບ້ານເປົ້າໝາຍຂອງໂຄງການ. ການຝຶກອົບຮົມດັ່ງກ່າວ ໄດ້ຈັດຂຶ້ນທີ່ຫ້ອງການຍຸຕິທຳເມືອງດາກຈຶງ ໂດຍມີຜູ້ເຂົ້າຮ່ວມທັງໝົດ 21 ທ່ານ (ໃນນັ້ນມີແມ່ຍິງ 8 ທ່ານ).

ຈຸດປະສົງຫຼັກ ແມ່ນເພື່ອສ້າງຄວາມຮູ້ ແລະ ທັກສະທີ່ຈຳເປັນ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ສະຫະກອນກາເຟພູດອຍດາກຈຶງ ເພື່ອໃຫ້ກຸ່ມເປົ້າໝາຍສາມາດດຳເນີນທຸລະກິດຂອງສະຫະກອນຕໍ່ໄປໄດ້ຢ່າງຍືນຍົງ ພາຍຫຼັງທີ່ໂຄງການສິ້ນສຸດລົງ.

ຜ່ານການຝຶກອົບຮົມທັງພາກທິດສະດີ ແລະ ພາກປະຕິບັດຕົວຈິງ, ເຫັນໄດ້ວ່ານັກສຳມະນາກອນສາມາດເຂົ້າໃຈເຕັກນິກການຂົ້ວ ແລະ ການຊີງກາເຟໄດ້ເປັນຢ່າງດີ ເຊິ່ງເຂົາເຈົ້າສາມາດນຳເອົາບົດຮຽນດັ່ງກ່າວໄປໝູນໃຊ້ເຂົ້າໃນວຽກງານຂອງສະຫະກອນ. ໃນອະນາຄົດ, ທາງສະຫະກອນອາດຈະສາມາດຜະລິດກາເຟຂົ້ວເພື່ອສົ່ງອອກສູ່ຕະຫຼາດໄດ້. ໃນຕອນທ້າຍຂອງການຝຶກອົບຮົມ ຍັງໄດ້ມີການມອບໃບຢັ້ງຢືນໃຫ້ແກ່ນັກສຳມະນາກອນ ເພື່ອເປັນຫຼັກຖານຢັ້ງຢືນຜົນສຳເລັດໃນຄັ້ງນີ້ອີກດ້ວຍ.







ເມສາ

## ການຝຶກອົບຮົມພາວະການເປັນຜູ້ນຳ ແລະ ການຄຸ້ມຄອງບໍລິຫານ

ໃນລະຫວ່າງວັນທີ 20-24 ເມສາ 2026, ທີມງານໂຄງການ SuPER WE ໄດ້ຮ່ວມກັບຄູຝຶກຈາກໂຮງຮຽນ ຢູນິຕີ (Unity) ເພື່ອການຄຸ້ມຄອງທຸລະກິດ ແລະ ການສຶກສາ ຈັດຝຶກອົບຮົມໃນຫົວຂໍ້ "ພາວະການເປັນຜູ້ນຳ ແລະ ການຄຸ້ມຄອງບໍລິຫານ" ໃຫ້ແກ່ຄູ່ຮ່ວມງານພາກລັດຂັ້ນແຂວງ ແລະ ຂັ້ນເມືອງ. ການຝຶກອົບຮົມໃນຄັ້ງນີ້ໄດ້ຈັດຂຶ້ນທີ່ຫ້ອງປະຊຸມພະແນກສາທາລະນະສຸກແຂວງເຊກອງ ໂດຍໃຫ້ກຽດເປັນປະທານຂອງ ທ່ານ ດຣ. ເພັດສະໄໝ ເທບວົງສາ, ຫົວໜ້າພະແນກສາທາລະນະສຸກແຂວງເຊກອງ. ງານຄັ້ງນີ້ມີຜູ້ເຂົ້າຮ່ວມທັງໝົດ 27 ທ່ານ (ໃນນັ້ນມີແມ່ຍິງ 10 ທ່ານ).

ຈຸດປະສົງຫຼັກ ແມ່ນເພື່ອເສີມສ້າງຄວາມເຂັ້ມແຂງທາງດ້ານພາວະຄວາມເປັນຜູ້ນຳ ແລະ ການບໍລິຫານຄຸ້ມຄອງ ສຳລັບພະນັກງານການນຳຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ມີຄວາມຮູ້ ແລະ ຄວາມສາມາດໃນການບໍລິຫານຄຸ້ມຄອງວຽກງານ ແລະ ໂຄງການຕ່າງໆ ຢ່າງມີປະສິດທິພາບ.

ຜ່ານການຝຶກອົບຮົມ, ເຫັນໄດ້ວ່າຜູ້ເຂົ້າຮ່ວມສາມາດນຳເອົາບົດຮຽນທີ່ໄດ້ຮຽນຮູ້ໄປໝູນໃຊ້ໃຫ້ເກີດປະໂຫຍດ ໃນວຽກງານການພັດທະນາຊຸມຊົນຢູ່ທ້ອງຖິ່ນຂອງເຂົາເຈົ້າ. ໃນຕອນທ້າຍຂອງການຝຶກອົບຮົມ, ທ່ານປະທານກອງປະຊຸມ ຍັງໄດ້ໃຫ້ກຽດມອບໃບຢັ້ງຢືນແກ່ນັກສຳມະນາກອນ ເພື່ອເປັນການຢັ້ງຢືນຜົນສຳເລັດໃນການຝຶກອົບຮົມຄັ້ງນີ້ອີກດ້ວຍ.







ເມສາ

## ງານເສວະນາກາເຟລາວ ປະຈຳປີ 2026

ໃນວັນທີ 24 ເມສາ 2026, ໂຄງການ SuPER WE ໄດ້ຈັດງານເສວະນາກາເຟລາວ ພາຍໃຕ້ຫົວຂໍ້: "ການລົງທຶນໃສ່ແມ່ຍິງຜູ້ຜະລິດກາເຟ ເພື່ອເລັ່ງຊຸກຍູ້ຄວາມຄືບໜ້າ ໃນການພັດທະນາຕ່ອງໂສ້ມູນຄ່າກາເຟ ທີ່ສົ່ງເສີມບົດບາດຍິງ-ຊາຍ". ຜູ້ເຂົ້າຮ່ວມປະກອບມີຕົວແທນຈາກພາກລັດຂັ້ນກະຊວງ, ຂັ້ນແຂວງ, ຂັ້ນເມືອງ, ຄູ່ຮ່ວມພັດທະນາ, ພາກເອກະຊົນ ແລະ ຕົວແທນແມ່ຍິງຊາວສວນກາເຟ ຈາກ 15 ບ້ານເປົ້າໝາຍໃນເມືອງດາກຈຶງ ແລະ ກຸ່ມຜະລິດກາເຟທ່າແຕງ. ງານດັ່ງກ່າວໄດ້ຈັດຂຶ້ນທີ່ໂຮງແຮມຈຳປາສັກ ແກຣນ, ນະຄອນປາກເຊ ໂດຍມີຜູ້ເຂົ້າຮ່ວມທັງໝົດ 149 ທ່ານ ແລະ ມີຜູ້ເຂົ້າຊົມຜ່ານການຖ່າຍທອດສົດຫຼາຍກວ່າ 70,000 ວິວ.

ຈຸດປະສົງຫຼັກ ແມ່ນເພື່ອເປັນເວທີໃນການຖອດຖອນບົດຮຽນ, ແບ່ງປັນປະສົບການ ແລະ ຊຸກຍູ້ບົດບາດການເປັນຜູ້ນຳຂອງແມ່ຍິງໃນຂະແໜງກາເຟ ເພື່ອສ້າງຄວາມເຂັ້ມແຂງ ແລະ ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ໃນຕ່ອງໂສ້ມູນຄ່າກາເຟລາວ ໃຫ້ມີຄວາມຍືນຍົງ.

ຜ່ານການຈັດງານໃນຄັ້ງນີ້, ເຫັນໄດ້ວ່າທຸກພາກສ່ວນໄດ້ຮ່ວມກັນປຶກສາຫາລືຢ່າງຟົດຟື້ນກ່ຽວກັບທ່າອ່ຽງຂອງຕະຫຼາດ, ຄວາມຕ້ອງການຂອງພາກເອກະຊົນ ແລະ ໄດ້ຮັບຟັງເລື່ອງລາວແຮງບັນດານໃຈຈາກແມ່ຍິງຊາວສວນກາເຟ. ສິ່ງເຫຼົ່ານີ້ຈະເປັນພື້ນຖານອັນສຳຄັນໃນການຊຸກຍູ້ໃຫ້ແມ່ຍິງກ້າວຂຶ້ນມາເປັນຜູ້ນຳໃນການຜະລິດກາເຟ. ໃນອະນາຄົດ, ການຮ່ວມມືດັ່ງກ່າວຈະຊ່ວຍຍົກລະດັບກາເຟລາວໃຫ້ເປັນທີ່ຍອມຮັບໃນຕະຫຼາດສາກົນ ໂດຍມີແມ່ຍິງເປັນກຳລັງສຳຄັນ. ງານໃນຄັ້ງນີ້ຖືເປັນຜົນສຳເລັດອັນຍິ່ງໃຫຍ່ ທີ່ໄດ້ຮັບການຮ່ວມມືຈາກທຸກພາກສ່ວນທີ່ກ່ຽວຂ້ອງເປັນຢ່າງດີ.



switchasia Haliéus 4FORM COOP International Cooperative Alliance ITC FAIRTRADE





## ເມສາ

### ຝຶກອົບຮົມຍົກສູງສະມັດຕະພາບຜົນຜະລິດ ແລະ ປັບປຸງຄຸນນະພາບກາເຟ

ໃນລະຫວ່າງວັນທີ 27 ຫາ 30 ເມສາ 2026 ທາງໂຄງການໄດ້ຮ່ວມກັບ ສູນຄົ້ນຄ້ວາກະສິກຳຫຼັກ 35 ເມືອງປາກຊ່ອງ ຈັດຝຶກອົບຮົມ ການຍົກສູງຜົນຜະລິດກາເຟ ແລະ ປັບປຸງຄຸນນະພາບກາເຟ ໂດຍການຜ່ານການເຮັດຝຸ່ນບົ່ມຊີວະພາບ ແລະ ນ້ຳໝັກບຳລຸງພືດ ຂຶ້ນທີ່ຫ້ອງການປົກຄອງເມືອງດາກຈຶງ ແລະ ພາກປະຕິບັດໂຕຈິງຢູ່ທີ່ບ້ານດາກວໍ ມີຜູ້ເຂົ້າຮ່ວມ 21 ທ່ານ ແລະ ຍິງ 8 ທ່ານ ໂດຍມີຈຸດປະສົງ ເພື່ອຍົກສະມັດຕະພາບຜົນຜະລິດກາເຟໂດຍເປັນມິດກັບສິ່ງແວດລ້ອມ ດ້ວຍຮູບແບບການນຳໃຊ້ນ້ຳໝັກບຳລຸງພືດ ແລະ ຝຸ່ນບົ່ມ, ຄວາມຄາດຫວັງຂອງການຝຶກອົບຮົມຄັ້ງນີ້ແມ່ນຢາກສ້າງຄູຝຶກໃຫ້ແຕ່ລະບ້ານເປົ້າມາຍສາມາດນຳໄປເຜີຍແຜ່ບົດຮຽນໃຫ້ຊາວບ້ານຂອງຕົນເອງ, ຜ່ານຝຶກອົບຮົມເຫັນໄດ້ວ່າຜູ້ທີ່ເຂົ້າຮ່ວມຝຶກອົບຮົມສາມາດນຳໃຊ້ບົດຮຽນທີ່ຜ່ານການຝຶກໄດ້ເປັນຢ່າງດີ ແລະ ໃນຕອນທ້າຍ ທາງໂຄງການ ແລະ ຄູຝຶກຍັງໄດ້ມອບໃບຍັ້ງຢືນເພື່ອເປັນກຳລັງໃຈ ແລະ ເປັນຫຼັກຜ່ານໃນການສຳເລັດການຝຶກອົບຮົມໃນຄັ້ງນີ້








## ກາເຟລາວກ້າວສູ່ສາກົນ: ການເຂົ້າຮ່ວມງານວາງສະແດງກາເຟໂລກ (World of Coffee 2026) ທີ່ປະເທດໄທ

ໃນລະຫວ່າງວັນທີ 7-9 ພຶດສະພາ 2026, ສະຫະກອນກາເຟພູດອຍດາກຈຶງ ພາຍໃຕ້ການສະໜັບສະໜູນຂອງໂຄງການ SuPER WE ເຊິ່ງໄດ້ຮັບທຶນຈາກສະຫະພາບເອີຣົບ (EU) ໄດ້ນຳເອົາຜະລິດຕະພັນຂອງຕົນເຂົ້າຮ່ວມງານວາງສະແດງກາເຟລະດັບໂລກ World of Coffee Bangkok 2026 ທີ່ສູນນິທັດສະການ BITEC, ບາງກອກ, ປະເທດໄທ.

ການເຂົ້າຮ່ວມໃນຄັ້ງນີ້ ຖືເປັນຄວາມພາກພູມໃຈຢ່າງຍິ່ງທີ່ໄດ້ເປັນຕົວແທນໃຫ້ແກ່ ສປປ ລາວ ຮ່ວມກັບບັນດາຫົວໜ່ວຍທຸລະກິດ ແລະ ສະຫະກອນກາເຟຊັ້ນນຳອື່ນໆ ເຊັ່ນ: Les Deux Soeurs Paksong, CPC (ສະຫະກອນຜູ້ຜະລິດກາເຟພູພຽງບໍລະເວນ), Abile, Comma Coffee, Yrou  Coffee, Sahai, Vanmai Coffee ແລະ Somxay Coffee. ງານວາງສະແດງກາເຟລະດັບໂລກຄັ້ງນີ້ ເປັນງານທີ່ຍິ່ງໃຫຍ່ ເຊິ່ງໄດ້ລວບລວມເອົາຜູ້ເຂົ້າຮ່ວມຈາກຫຼາຍກວ່າ 40 ປະເທດ, ໂດຍມີບໍລິສັດເຂົ້າຮ່ວມວາງສະແດງຫຼາຍກວ່າ 400 ແຫ່ງ ແລະ ມີບູດວາງສະແດງຫຼາຍກວ່າ 500 ບູດ. ພ້ອມດຽວກັນນັ້ນ, ງານດັ່ງກ່າວຍັງສາມາດດຶງດູດເອົາຜູ້ຊ່ຽວຊານ, ຜູ້ຊື້ ແລະ ຜູ້ມັກຮັກໃນກາເຟຫຼາຍກວ່າ 30,000 ທ່ານ ຈາກທົ່ວທຸກມຸມໂລກ.

ການນຳເອົາຜະລິດຕະພັນຈາກເຂດພູດອຍຂອງ ສປປ ລາວ ສູ່ເວທີກາເຟລະດັບສາກົນໃນຄັ້ງນີ້ ຖືເປັນໂອກາດອັນດີໃນການນຳສະເໜີຄຸນນະພາບ ແລະ ເລື່ອງລາວອັນເປັນເອກະລັກຂອງກາເຟລາວໃຫ້ຊາວໂລກໄດ້ຮັບຮູ້. ພ້ອມທັງເປັນການສະໜັບສະໜູນການຊອກຫາຕະຫຼາດໃໝ່ໆ ເພື່ອສ້າງຊີວິດການເປັນຢູ່ທີ່ຍືນຍົງ ໃຫ້ແກ່ຊຸມຊົນຊາວສວນກາເຟຂອງພວກເຮົາຢ່າງແທ້ຈິງ.







ພຶດສະພາ

## ການຝຶກອົບຮົມສົ່ງເສີມການສ້າງຄວາມເຂັ້ມແຂງ ແລະ ຄວາມກ້າວໜ້າຂອງແມ່ຍິງ

ໃນລະຫວ່າງວັນທີ 11-14 ພຶດສະພາ 2026, ໂຄງການ SuPER WE ໄດ້ຮ່ວມກັບຄູຝຶກຈາກສະຫະພັນນັກຮົບເກົ່າ ຈັດຝຶກອົບຮົມໃນຫົວຂໍ້ "ການສົ່ງເສີມຄວາມເຂັ້ມແຂງ ແລະ ຄວາມກ້າວໜ້າຂອງແມ່ຍິງ" ໃຫ້ແກ່ພະນັກງານຄູ່ຮ່ວມງານພາກລັດຂັ້ນແຂວງ ແລະ ຂັ້ນເມືອງ. ການຝຶກອົບຮົມຄັ້ງນີ້ໄດ້ຈັດຂຶ້ນທີ່ຫ້ອງປະຊຸມພະແນກສາທາລະນະສຸກ ແຂວງເຊກອງ ໂດຍໃຫ້ກຽດເປັນປະທານຂອງ ທ່ານ ນາງ ເພັດດາແກ້ວ ພົນສະລາດ, ຮອງປະທານສະຫະພັນແມ່ຍິງແຂວງເຊກອງ ໂດຍມີຜູ້ເຂົ້າຮ່ວມທັງໝົດ 31 ທ່ານ (ໃນນັ້ນມີແມ່ຍິງ 18 ທ່ານ).

ຈຸດປະສົງຫຼັກ ແມ່ນເພື່ອເສີມຂະຫຍາຍຄວາມເຂົ້າໃຈກ່ຽວກັບແນວຄວາມຄິດດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ ພ້ອມທັງເສີມສ້າງຄວາມສາມາດຂອງຜູ້ເຂົ້າຮ່ວມໃນການເຊື່ອມສານບົດບາດຍິງ-ຊາຍ ເຂົ້າໃນການວາງແຜນການພັດທະນາ.

ຜ່ານການຝຶກອົບຮົມ, ຜູ້ເຂົ້າຮ່ວມໄດ້ຮຽນຮູ້ຫຼາຍຫົວຂໍ້ທີ່ສຳຄັນ ເຊິ່ງສາມາດນຳໄປຈັດຕັ້ງປະຕິບັດເພື່ອເຊື່ອມສານວຽກງານບົດບາດຍິງ-ຊາຍ ເຂົ້າໃນທຸກໆຂົງເຂດວຽກງານ ແນໃສ່ສົ່ງເສີມຄວາມສະເໝີພາບ ແລະ ສ້າງຜົນປະໂຫຍດໃຫ້ແກ່ຊຸມຊົນໃນແຕ່ລະທ້ອງຖິ່ນຢ່າງແທ້ຈິງ. ໃນຕອນທ້າຍຂອງການຝຶກອົບຮົມ, ທ່ານປະທານກອງປະຊຸມຍັງໄດ້ໃຫ້ກຽດມອບໃບຢັ້ງຢືນໃຫ້ແກ່ນັກສຳມະນາກອນ ເພື່ອເປັນຫຼັກຖານຢັ້ງຢືນເຖິງຜົນສຳເລັດໃນຄັ້ງນີ້ອີກດ້ວຍ.



switchasia Haliéus 4FORM ICA International Cooperative Alliance ITC ILO FAIRTRADE





# ພຶດສະພາ

## ການເຂົ້າຮ່ວມງານວາງສະແດງໃນງານສະເຫຼີມສະຫຼອງວັນຊາ ແລະ ກາເຟສາກົນ ປະຈຳປີ 2026

ໃນລະຫວ່າງວັນທີ 19-25 ພຶດສະພາ 2026, ໂຄງການ SuPER WE ໄດ້ສະໜັບສະໜູນຊາວສວນກາເຟຈາກສະຫະກອນກາເຟພູດອຍດາກຈຶງ ເພື່ອເຂົ້າຮ່ວມງານວາງສະແດງໃນງານສະເຫຼີມສະຫຼອງວັນຊາ ແລະ ກາເຟສາກົນ ປະຈຳປີ 2026 (International Tea and Coffee Day 2026) ເຊິ່ງຈັດຂຶ້ນທີ່ສູນການຄ້າ Parkson, ນະຄອນຫຼວງວຽງຈັນ. ການເຂົ້າຮ່ວມງານໃນຄັ້ງນີ້ ປະກອບມີຕົວແທນຊາວສວນກາເຟ ແລະ ພາກລັດເຂົ້າຮ່ວມທັງໝົດ 5 ທ່ານ (ໃນນັ້ນມີແມ່ຍິງ 4 ທ່ານ).

ຈຸດປະສົງຫຼັກຂອງການເຂົ້າຮ່ວມງານ ແມ່ນເພື່ອເປີດຕົວຜະລິດຕະພັນກາເຟຢ່າງເປັນທາງການ ພ້ອມທັງສ້າງເຄືອຂ່າຍດ້ານການຕະຫຼາດ ເພື່ອເຊື່ອມໂຍງຜະລິດຕະພັນທ້ອງຖິ່ນສູ່ຕະຫຼາດທັງພາຍໃນ ແລະ ຕ່າງປະເທດ.

ອົງການ ແຄຣ໌ ນານາຊາດ ປະຈຳ ສປປ ລາວ ມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ໄດ້ຮ່ວມເປັນສ່ວນໜຶ່ງໃນການສົ່ງເສີມຕ່ອງໂສ້ມູນຄ່າຊາ ແລະ ກາເຟແບບຍືນຍົງ ເພື່ອແນໃສ່ຍົກລະດັບຄຸນນະພາບຊີວິດ ແລະ ສ້າງຄວາມເປັນຢູ່ທີ່ດີຂຶ້ນໃຫ້ແກ່ຊາວກະສິກອນທ້ອງຖິ່ນ. ງານວາງສະແດງດັ່ງກ່າວໄດ້ຮັບຄວາມສົນໃຈ ແລະ ການສະໜັບສະໜູນຢ່າງຫຼວງຫຼາຍຈາກຜູ້ເຂົ້າຮ່ວມຊົມງານ ເຊິ່ງຖືເປັນໝາກຜົນສຳເລັດຢ່າງຈົບງາມໃຫ້ແກ່ກຸ່ມຊາວສວນກາເຟເມືອງດາກຈຶງ.




switchasia · Haliéus · 4FORM · coop International Cooperative Alliance · ITC · FAIRTRADE






## ພຶດສະພາ

### ການເກັບກຳຂໍ້ມູນ ເພື່ອປະເມີນຜົນທ້າຍໂຄງການ SuPER WE

ໃນລະຫວ່າງວັນທີ 27 ພຶດສະພາ ຫາ 4 ມິຖຸນາ 2026, ໂຄງການ SuPER WE ໄດ້ຮ່ວມກັບ ບໍລິສັດທີ່ປຶກສາ XMT ພ້ອມດ້ວຍຄູ່ຮ່ວມງານພາກລັດຂັ້ນແຂວງ ແລະ ຂັ້ນເມືອງ ລົງເກັບກຳຂໍ້ມູນເພື່ອປະເມີນຜົນທ້າຍໂຄງການ.

ຈຸດປະສົງຫຼັກຂອງການລົງປະເມີນໃນຄັ້ງນີ້ ແມ່ນເພື່ອຕີລາຄາຜົນສຳເລັດຂອງໂຄງການ ໂດຍການເກັບກຳຂໍ້ມູນຕົວຊີ້ວັດທ້າຍໂຄງການ ເພື່ອວັດແທກລະດັບການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ປະເມີນຜົນກະທົບທີ່ມີຕໍ່ຕ່ອງໂສ້ມູນຄ່າກາເຟ.

ທີມງານປະເມີນຜົນໄດ້ດຳເນີນການສຳພາດເປົ້າໝາຍຫຼັກ 3 ພາກສ່ວນຄື: ຄູ່ຮ່ວມງານພາກລັດຂັ້ນແຂວງ ແລະ ຂັ້ນເມືອງ, ຊຸມຊົນໃນ 9 ບ້ານເປົ້າໝາຍຂອງໂຄງການ, ແລະ ກຸ່ມຜູ້ຊື້-ຜູ້ຂາຍກາເຟ ໃນຂອບເຂດເມືອງດາກຈຶງ ແລະ ເມືອງທ່າແຕງ. ການລົງເກັບກຳຂໍ້ມູນໃນຄັ້ງນີ້ ມີຜູ້ເຂົ້າຮ່ວມໃຫ້ສຳພາດທັງໝົດ 134 ທ່ານ (ໃນນັ້ນມີແມ່ຍິງ 88 ທ່ານ).

ພາບລວມຂອງການລົງເກັບກຳຂໍ້ມູນ ແລະ ສຳພາດເພື່ອປະເມີນຜົນທ້າຍໂຄງການ SuPER WE ໃນຄັ້ງນີ້ ແມ່ນໄດ້ສຳເລັດລົງຢ່າງຈົບງາມຕາມແຜນການທີ່ວາງໄວ້.



switchasia Haliéus 4FORM ICA ITC FAIRTRADE






## ພຶດສະພາ

### ການຝຶກອົບຮົມກ່ຽວກັບວົງຈອນສັດຕູພືດ ແລະ ວິທີການປ້ອງກັນ

ໃນລະຫວ່າງວັນທີ 29 ພຶດສະພາ ຫາ 7 ມິຖຸນາ 2026, ໂຄງການ SuPER WE ໄດ້ຮ່ວມກັບ ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງເຊກອງ ລົງຈັດຝຶກອົບຮົມໃນຫົວຂໍ້ "ວົງຈອນສັດຕູພືດ ແລະ ວິທີການປ້ອງກັນ" ໃຫ້ແກ່ 15 ບ້ານເປົ້າໝາຍຂອງໂຄງການ. ການລົງຝຶກອົບຮົມໃນຄັ້ງນີ້ ໄດ້ຮັບຄວາມສົນໃຈຢ່າງຫຼວງຫຼາຍ ໂດຍມີຜູ້ເຂົ້າຮ່ວມທັງໝົດ 247 ທ່ານ (ໃນນັ້ນມີແມ່ຍິງເຖິງ 180 ທ່ານ).

ຈຸດປະສົງຫຼັກຂອງການຝຶກອົບຮົມ ແມ່ນເພື່ອສ້າງຂີດຄວາມສາມາດທາງດ້ານເຕັກນິກວິຊາການໃຫ້ແກ່ຊາວກະສິກອນ ໃນການກຳຈັດສັດຕູພືດ ແລະ ແມງໄມ້ ດ້ວຍວິທີການທາງທຳມະຊາດ ໂດຍການນຳໃຊ້ນ້ຳສະກັດຈາກສະໝຸນໄພທີ່ສາມາດຫາໄດ້ງ່າຍໃນທ້ອງຖິ່ນ.

ການຝຶກອົບຮົມໄດ້ເນັ້ນໜັກທັງການຮຽນຮູ້ທາງພາກທິດສະດີ ແລະ ການລົງມືປະຕິບັດຕົວຈິງ. ຜ່ານການຝຶກອົບຮົມ, ເຫັນໄດ້ວ່າຊາວບ້ານຈາກບັນດາບ້ານເປົ້າໝາຍສາມາດເຂົ້າໃຈ ແລະ ກຳແໜ້ນບົດຮຽນໄດ້ເປັນຢ່າງດີ ເຊິ່ງເຂົາເຈົ້າສາມາດນຳເອົາຄວາມຮູ້ທີ່ໄດ້ຮັບໄປເຜີຍແຜ່ຕໍ່ໃຫ້ຄົນໃນຊຸມຊົນ ແລະ ສາມາດນຳໄປຈັດຕັ້ງປະຕິບັດຕົວຈິງພາຍໃນຄອບຄົວ ແລະ ສວນກາເຟຂອງຕົນເອງໄດ້ຢ່າງມີປະສິດທິພາບ.







## ມິຖຸນາ

### ການຝຶກອົບຮົມຕິດຕາມຜົນການຝຶກອົບຮົມກາເຟພິເສດ ແລະ ກອງປະຊຸມສະຫຼຸບວຽກງານຫຼັງການເກັບກ່ຽວຂັ້ນສຸດທ້າຍ

ໃນວັນທີ 1-5 ມິຖຸນາ 2026, ສະຫະກອນກາເຟພູດອຍດາກຈຶງ ໄດ້ຈັດກອງປະຊຸມທົບທວນການດຳເນີນງານ ແລະ ວາງແຜນຍຸດທະສາດການຕະຫຼາດ, ການຂາຍ ແລະ ການຈ່າຍຜົນຕອບແທນ ສົກປີ 2025-2026 ໃຫ້ມີຄວາມຊັດເຈນ ແລະ ສາມາດຈັດຕັ້ງປະຕິບັດໄດ້ຈິງ. ພ້ອມທັງຮ່ວມກັນສະຫຼຸບບັນຫາໃນໄລຍະການເກັບກ່ຽວ ແລະ ປຸງແຕ່ງທີ່ຜ່ານມາເພື່ອຊອກຫາທາງແກ້ໄຂ.

ກອງປະຊຸມຄັ້ງນີ້ຊີ້ໃຫ້ເຫັນວ່າ "ຄຸນນະພາບພຽງຢ່າງດຽວບໍ່ພຽງພໍ" ແຕ່ຕ້ອງມີຂໍ້ມູນ, ອັດຕະລັກ ແລະ ການສື່ສານທີ່ດີ ໂດຍຜ່ານສື່ອອນລາຍ. ຈາກນີ້ໄປ, ສະຫະກອນກາເຟພູດອຍດາກຈຶງ ຈະສຸມໃສ່ການພັດທະນາຈາກການຜະລິດໄປສູ່ການຕະຫຼາດຍຸກໃໝ່ ເພື່ອສ້າງມູນຄ່າເພີ່ມ ແລະ ຍົກລະດັບລາຍຮັບຂອງຊຸມຊົນຊາວສວນກາເຟແຂວງເຊກອງ ຢ່າງຍືນຍົງ.







# ມິຖຸນາ

## ກອງປະຊຸມຝຶກອົບຮົມການເຊື່ອມໂຍງຕະຫຼາດ ພາຍໃຕ້ໂຄງການ SuPER WE ທີ່ ເມືອງດາກຈຶງ

ໃນລະຫວ່າງວັນທີ 2-3 ມິຖຸນາ 2026, ອົງການແຄຣ໌ ນານາຊາດ ໄດ້ຈັດກອງປະຊຸມຝຶກອົບຮົມການເຊື່ອມໂຍງຕະຫຼາດ ພາຍໃຕ້ໂຄງການ SuPER WE ຢູ່ທີ່ເມືອງດາກຈຶງ, ແຂວງເຊກອງ. ການຝຶກອົບຮົມຄັ້ງນີ້ ມີການເຂົ້າຮ່ວມຈາກຊາວກະສິກອນຜູ້ປູກກາເຟ 15 ທ່ານ ທີ່ເປັນຕົວແທນຈາກ 15 ບ້ານ ຂອງສະຫະກອນກາເຟພູດອຍດາກຈຶງ ພ້ອມດ້ວຍທີ່ປຶກສາໂຄງການ.

ຈຸດປະສົງຂອງການຈັດກອງປະຊຸມຄັ້ງນີ້ ແມ່ນເພື່ອສະໜອງຄວາມຮູ້ດ້ານການຕະຫຼາດ, ສ້າງຄວາມໝັ້ນໃຈໃນການດຳເນີນທຸລະກິດ ແລະ ຕິດອາວຸດທາງດ້ານເຄື່ອງມືດິຈິຕອນ ໃຫ້ແກ່ສະມາຊິກສະຫະກອນ ເພື່ອໃຫ້ສາມາດຮັກສາ ແລະ ພັດທະນາທຸລະກິດກາເຟຂອງຕົນເອງໄດ້ຢ່າງເປັນເອກະລາດ. ພ້ອມກັນນັ້ນ ຍັງເປັນການສ້າງຄວາມເຂັ້ມແຂງໃນການເຊື່ອມໂຍງຕະຫຼາດ ເພື່ອເພີ່ມໂອກາດໃນການຂາຍ ແລະ ສະໜັບສະໜູນການຫັນໄປສູ່ຕະຫຼາດກາເຟພິເສດ (specialty coffee).

ການຈັດກອງປະຊຸມໄດ້ດຳເນີນໄປເປັນເວລາ 2 ມື້, ໂດຍມື້ທຳອິດໄດ້ເນັ້ນໃສ່ການລາຍງານຂໍ້ມູນການຜະລິດ ແລະ ການຂາຍຂອງທັງ 15 ບ້ານ ສຳລັບລະດູການ 2025-26. ສ່ວນມື້ທີສອງ ແມ່ນໄດ້ສຸມໃສ່ແນວຄວາມຄິດການເຊື່ອມໂຍງຕະຫຼາດ, ໂອກາດສຳລັບກາເຟພິເສດ ແລະ ການຝຶກປະຕິບັດຕົວຈິງໃນການໂຄສະນາຜ່ານສື່ດິຈິຕອນ ແລະ ສື່ສັງຄົມອອນລາຍ.

ໃນຕອນທ້າຍຂອງກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ສະແດງໃຫ້ເຫັນເຖິງຄວາມສາມາດໃນການປະຕິບັດຕົວຈິງ ໂດຍທຸກກຸ່ມສາມາດຜະລິດ ແລະ ເຜີຍແຜ່ເນື້ອຫາໂຄສະນາທາງສື່ສັງຄົມອອນລາຍ ໂດຍນຳໃຊ້ສະມາດໂຟນຂອງຕົນເອງໄດ້ສຳເລັດພາຍໃນເວລາບໍ່ເທົ່າໃດຊົ່ວໂມງຫຼັງຈາກການຝຶກອົບຮົມ. ຜົນສຳເລັດທີ່ພົ້ນເດັ່ນໜຶ່ງແມ່ນການຖອດຖອນບົດຮຽນຈາກ ທ່ານ ນາງ ເພັດສະໝອນ ສີລາພອນ ຈາກບ້ານຄູນໄຊ ທີ່ສາມາດຂາຍເມັດກາເຟຂຽວໃຫ້ກັບຜູ້ຊື້ກາເຟພິເສດຢູ່ທີ່ນະຄອນຫຼວງວຽງຈັນດ້ວຍຕົນເອງ ເຊິ່ງເປັນແບບຢ່າງທີ່ດີໃຫ້ແກ່ຜູ້ເຂົ້າຮ່ວມອື່ນໆ.







ມິຖຸນາ

## ທັດສະນະສຶກສາແລກປ່ຽນບົດຮຽນການພົວພັນລະຫວ່າງຊາວກະສິກອນ ແລະ ພາກອຸດສາຫະກຳ ທີ່ແຂວງໄຊສົມບູນ ພາຍໃຕ້ໂຄງການ SuPER WE

ໃນລະຫວ່າງວັນທີ 7-13 ມິຖຸນາ 2024, ໄດ້ມີການຈັດຕັ້ງການທັດສະນະສຶກສາຢູ່ແຂວງໄຊສົມບູນ ພາຍໃຕ້ໂຄງການ ຕ່ອງໂສ້ມູນຄ່າກາເຟ ທີ່ມີຄວາມຮັບຜິດຊອບທາງດ້ານຈັນຍາບັນ, ການຜະລິດແບບຍືນຍົງ ແລະ ສົ່ງເສີມຄວາມເຂັ້ມແຂງຂອງແມ່ຍິງ ໃນ ສປປ ລາວ (SuPER WE Coffee). ການເດີນທາງຄັ້ງນີ້ ມີການເຂົ້າຮ່ວມຈາກບັນດາຕົວແທນຂັ້ນແຂວງ ແລະ ຂັ້ນເມືອງດາກຈຶງ, ແຂວງເຊກອງ ເຊັ່ນ: ຮອງຫົວໜ້າຫ້ອງວ່າການປົກຄອງແຂວງ, ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ສະຫະພັນແມ່ຍິງແຂວງ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ຮອງເຈົ້າເມືອງດາກຈຶງ ພ້ອມດ້ວຍບັນດາຫ້ອງການກ່ຽວຂ້ອງຂັ້ນເມືອງ, ຕົວແທນຈາກອົງການແຄຣ໌ ນານາຊາດ (CARE) ແລະ ສະຫະກອນກາເຟດາກຈຶງ.

ຈຸດປະສົງຫຼັກຂອງການທັດສະນະສຶກສາຄັ້ງນີ້ ແມ່ນເພື່ອຮຽນຮູ້ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການຕ່າງໆ ລວມເຖິງການຖອດຖອນບົດຮຽນກ່ຽວກັບຊ່ອງຫວ່າງທີ່ຕິດພັນກັບການພົວພັນ ລະຫວ່າງ ຊາວກະສິກອນລາຍຍ່ອຍ ແລະ ກິດຈະກຳທາງດ້ານອຸດສາຫະກຳ, ໂດຍສະເພາະແມ່ນໃນຂະແໜງບໍ່ແຮ່.

ການທັດສະນະສຶກສາຄັ້ງນີ້ ໄດ້ເນັ້ນໃສ່ການຖອດຖອນບົດຮຽນຮ່ວມກັບສະມາຊິກສະຫະກອນກາເຟເມືອງດາກຈຶງ ຈາກ 3 ບ້ານ ຄື: ບ້ານດາກວໍ, ບ້ານດາກງອຍ ແລະ ບ້ານຄູນໄຊ. ທັງ 3 ບ້ານນີ້ ຖືກລະບຸວ່າເປັນບ້ານທີ່ໄດ້ຮັບຜົນກະທົບຈາກການສຳປະທານອຸດສາຫະກຳບົກຊິດ/ອາລູມິນຽມ ຂອງບໍລິສັດອຸດສາຫະກຳຫວຽດນາມ.

ການລົງທັດສະນະສຶກສາຄັ້ງນີ້ ໄດ້ສຳເລັດລົງດ້ວຍໝາກຜົນອັນຈົບງາມ ໂດຍມີຜູ້ເຂົ້າຮ່ວມທັງໝົດ 17 ທ່ານ (ໃນນັ້ນມີຕົວແທນຈາກອົງການແຄຣ໌ 4 ທ່ານ). ພິເສດແມ່ນມີຜູ້ເຂົ້າຮ່ວມທີ່ເປັນແມ່ຍິງຈຳນວນ 6 ທ່ານ ຫຼື ກວມເອົາ 35% ຂອງຜູ້ເຂົ້າຮ່ວມທັງໝົດ.




switchasia Haliéus 4FORM coop International Cooperative Alliance ITC FAIRTRADE





# ມິຖຸນາ

## ກອງປະຊຸມປຶກສາຫາລື ແລະ ຖອດຖອນບົດຮຽນ ລະຫວ່າງ ສະຫະກອນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຊຸກຍູ້ຕ່ອງໂສ້ມູນຄ່າກາເຟ ແບບຍືນຍົງ

ນະຄອນປາກເຊ, ແຂວງຈຳປາສັກ – ໃນວັນທີ 19 ມິຖຸນາ 2026 ທີ່ຜ່ານມານີ້, ໄດ້ມີການຈັດກອງປະຊຸມປຶກສາຫາລື ແລະ ຖອດຖອນບົດຮຽນ ລະຫວ່າງ ສະຫະກອນ ແລະ ພາກສ່ວນກ່ຽວຂ້ອງ ຂຶ້ນຢ່າງເປັນທາງການ ພາຍໃຕ້ "ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບຕ່ອງໂສ້ການສ້າງມູນຄ່າເພີ່ມຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ແຂວງເຊກອງ".

ກອງປະຊຸມໃນຄັ້ງນີ້ ມີຈຸດປະສົງຕົ້ນຕໍເພື່ອສ້າງເວທີແລກປ່ຽນ, ປຶກສາຫາລື ແລະ ເປີດໂອກາດໃຫ້ຄະນະບໍລິຫານສະຫະກອນກາເຟພູດອຍດາກຈຶງ, ຊາວກະສິກອນ, ພາກລັດ, ພາກເອກະຊົນ ແລະ ຄູ່ຮ່ວມພັດທະນາ ໄດ້ມາພົບປະສົນທະນາຮ່ວມກັນ. ພ້ອມດຽວກັນນັ້ນ, ຍັງໄດ້ຮ່ວມກັນທົບທວນ ແລະ ປະເມີນສະພາບການ, ສິ່ງທ້າທາຍ ທີ່ສະຫະກອນກຳລັງປະເຊີນຢູ່ ເປັນຕົ້ນແມ່ນ ບັນຫາດ້ານຕ່ອງໂສ້ການຜະລິດ, ຄຸນນະພາບສິນຄ້າ ແລະ ການເຂົ້າເຖິງຕະຫຼາດ. ຜ່ານການຄົ້ນຄວ້າ, ກອງປະຊຸມໄດ້ຮ່ວມກັນວາງແຜນຍຸດທະສາດ, ກຳນົດແຜນການເຄື່ອນໄຫວ ແລະ ກົນໄກການປະສານງານ ເພື່ອຍົກລະດັບຄວາມອາດສາມາດ, ເພີ່ມອຳນາດໃນການຕໍ່ຮອງລາຄາ ແລະ ສ້າງຄວາມຍືນຍົງໃນການບໍລິຫານຈັດການທຸລະກິດຂອງສະຫະກອນຮ່ວມກັບຄູ່ຄ້າໃນອະນາຄົດ.



switchasia · Haliéus · 4FORM · coop International Cooperative Alliance · ITC · FAIRTRADE





# ມິຖຸນາ

## ການຝຶກອົບຮົມສ້າງຄວາມເຂັ້ມແຂງດ້ານການສື່ສານ ແລະ ສື່ສັງຄົມອອນລາຍ ໃຫ້ແກ່ສະຫະກອນກາເຟພູດອຍດາກຈຶງ

ໃນລະຫວ່າງວັນທີ 17-19 ມິຖຸນາ 2026, ທີມງານສື່ສານ ຂອງອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ຈັດການຝຶກອົບຮົມສ້າງຄວາມເຂັ້ມແຂງດ້ານການສື່ສານ ແລະ ສື່ສັງຄົມອອນລາຍ ຂຶ້ນທີ່ເມືອງດາກຈຶງ, ແຂວງເຊກອງ. ການຝຶກອົບຮົມຄັ້ງນີ້ ໄດ້ມີການເຂົ້າຮ່ວມຈາກສະມາຊິກຄະນະກຳມະການຄຸ້ມຄອງສະຫະກອນ, ສະມາຊິກສະຫະກອນທີ່ຮັບຜິດຊອບວຽກງານການສື່ສານ ແລະ ຕົວແທນຊາວໜຸ່ມ ພ້ອມດ້ວຍຊາວກະສິກອນທີ່ຖືກຄັດເລືອກ ເຊິ່ງສະໜັບສະໜູນກິດຈະກຳສົ່ງເສີມສະຫະກອນ.

ຈຸດປະສົງຫຼັກຂອງການຝຶກອົບຮົມຄັ້ງນີ້ ແມ່ນເພື່ອສ້າງຄວາມເຂັ້ມແຂງດ້ານຄວາມສາມາດໃນການສື່ສານຂອງສະມາຊິກສະຫະກອນກາເຟເຂດພູດອຍດາກຈຶງ ໃນການສົ່ງເສີມກິດຈະກຳ, ຜະລິດຕະພັນ ແລະ ເລື່ອງລາວຂອງຊາວກະສິກອນໃຫ້ແກ່ກຸ່ມເປົ້າໝາຍທີ່ກວ້າງຂວາງຂຶ້ນ. ພ້ອມທັງຍົກລະດັບຄວາມສາມາດໃນການຂຽນເນື້ອຫາ ແລະ ການຄຸ້ມຄອງສື່ສັງຄົມອອນລາຍ ເພື່ອສະໜັບສະໜູນການມີໜ້າຢູ່ໃນສື່ສັງຄົມອອນລາຍ ແລະ ການມີສ່ວນຮ່ວມຂອງມວນຊົນ.

ການຝຶກອົບຮົມຄັ້ງນີ້ ໄດ້ເນັ້ນໃສ່ການລົງມືປະຕິບັດຕົວຈິງໃນຫຼາຍຫົວຂໍ້ ເຊັ່ນ: ການຖ່າຍຮູບ ແລະ ຖ່າຍວິດີໂອດ້ວຍສະມາດໂຟນ ເພື່ອເກັບກຳເອກະສານກ່ຽວກັບການຜະລິດກາເຟ, ການອອກແບບສື່ການສື່ສານ, ການສ້າງເນື້ອຫາສຳລັບສື່ສັງຄົມອອນລາຍ ພ້ອມທັງໄດ້ມີການລົງປະຕິບັດຕົວຈິງພາກສະໜາມຢູ່ສວນກາເຟ ເພື່ອນຳໃຊ້ທັກສະທີ່ໄດ້ຮຽນຮູ້.

ຫຼັງຈາກສຳເລັດການຝຶກອົບຮົມ ຜູ້ເຂົ້າຮ່ວມສາມາດສ້າງເນື້ອຫາການສື່ສານທີ່ໜ້າສົນໃຈດ້ວຍຕົນເອງ ແລະ ຄຸ້ມຄອງໜ້າເຟສບຸກ (Facebook pages) ໄດ້ຢ່າງມີປະສິດທິຜົນ ເຊິ່ງໄດ້ປະກອບສ່ວນເຂົ້າໃນການສ້າງຄວາມເຂັ້ມແຂງໃນການເບິ່ງເຫັນ ແລະ ການສົ່ງເສີມສະຫະກອນກາເຟເຂດພູດອຍດາກຈຶງ.




switchasia Haliéus 4FORM coop International Cooperative Alliance ITC FAIRTRADE





# ມິຖຸນາ

## ກອງປະຊຸມປິດໂຄງການ SuPER-WE

ໃນວັນທີ 24 ມິຖຸນາ 2026, ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ຈັດກອງປະຊຸມປິດໂຄງການ SuPER-WE ຂຶ້ນທີ່ຫ້ອງປະຊຸມສະໂມສອນປົກຄອງເມືອງດາກຈຶງ, ແຂວງເຊກອງ. ກອງປະຊຸມຄັ້ງນີ້ ໄດ້ມີການເຂົ້າຮ່ວມຈາກການນຳຂັ້ນແຂວງ ແລະ ເມືອງ, ຕາງໜ້າສະຫະພາບເອີຣົບ, ທີມງານຈາກອົງການແຄຣ໌, ອົງການ Haliéus, ອົງການສະຫະກອນສາກົນ (ICA) ພ້ອມດ້ວຍສະມາຊິກສະຫະກອນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ຈຸດປະສົງຫຼັກຂອງກອງປະຊຸມປິດໂຄງການ ແມ່ນເພື່ອສະຫຼຸບຜົນການຈັດຕັ້ງປະຕິບັດ ແລະ ຜົນສຳເລັດຂອງໂຄງການ SuPER-WE ຢ່າງເປັນທາງການ, ພ້ອມທັງແລກປ່ຽນບົດຮຽນ ແລະ ສ້າງຄວາມໝັ້ນໃຈໃນການສືບຕໍ່ດຳເນີນງານຢ່າງຍືນຍົງ. ນອກຈາກນີ້, ຍັງເປັນການສ້າງຄວາມເຂັ້ມແຂງໃນການເຊື່ອມໂຍງລະຫວ່າງພາກສ່ວນກ່ຽວຂ້ອງ ເພື່ອຮອງຮັບການສືບຕໍ່ພັດທະນາໃນອະນາຄົດ.

ກອງປະຊຸມໄດ້ເນັ້ນໃສ່ການສະແດງຜົນສຳເລັດທີ່ພົ້ນເດັ່ນ ຜ່ານການນຳສະເໜີວິດີໂອຂອງໂຄງການ ແລະ ການລາຍງານຜົນການຈັດຕັ້ງປະຕິບັດ. ພາຍໃນງານຍັງມີກິດຈະກຳການແບ່ງປັນຄວາມຮູ້ສຶກຈາກແມ່ຍິງຜູ້ທີ່ໄດ້ຮັບຜົນປະໂຫຍດ, ການຈັດງານວາງສະແດງສິນຄ້າ, ມຸມຊີມກາເຟ ແລະ ການຈັບຄູ່ທຸລະກິດ. ພິເສດແມ່ນພິທີມອບ-ຮັບຊັບສິນ, ເອກະສານ ແລະ ຄວາມຮັບຜິດຊອບຢ່າງເປັນທາງການ ໃຫ້ແກ່ສະຫະກອນດາກຈຶງ ເພື່ອຮັບປະກັນຄວາມເປັນເຈົ້າການໃນການສືບຕໍ່ວຽກງານ.

ພາຍຫຼັງສຳເລັດກອງປະຊຸມ, ບັນດາພາກສ່ວນທີ່ກ່ຽວຂ້ອງມີຄວາມເຂົ້າໃຈອັນເປັນເອກະພາບກ່ຽວກັບຜົນໄດ້ຮັບ ແລະ ສິ່ງທ້າທາຍຂອງໂຄງການ. ການມອບ-ຮັບໃນຄັ້ງນີ້ ຖືເປັນການເສີມສ້າງຄວາມມຸ່ງໝັ້ນຂອງສະຫະກອນ ແລະ ອຳນາດການປົກຄອງທ້ອງຖິ່ນ ໃນການຮັກສາຜົນປະໂຫຍດ ແລະ ສືບຕໍ່ພັດທະນາຕ່ອງໂສ້ມູນຄ່າກາເຟໃຫ້ຍືນຍົງ ຫຼັງຈາກໂຄງການສິ້ນສຸດລົງ.





# ສຽງຂອງການປ່ຽນແປງ

## ການສ້າງຄວາມເຂັ້ມແຂງ ທາງດ້ານເສດຖະກິດໃຫ້ແກ່ຊາວສວນ

**ບັນທຶກ ແລະ ສຳພາດໂດຍ : ພະນິມພອນ ພະອຸທຸມ**

**ທ່ານ ນາງ ຈ່ອຍ ກິມສອນຈັນ**, ຜູ້ອຳນວຍຄວາມສະດວກໃນຊຸມຊົນ, ເຄີຍປະສົບກັບຄວາມຫຍຸ້ງຍາກໃນການເຮັດສວນກາເຟໃນອະດີດເນື່ອງຈາກ ຂາດຄວາມຮູ້ທາງດ້ານເຕັກນິກການປູກ ແລະ ການກ້າເບ້ຍ. ຢ່າງໃດກໍຕາມ, ນັບຕັ້ງແຕ່ມີໂຄງການເຂົ້າມາສະໜັບສະໜູນ, ທ່ານນາງໄດ້ຮັບການພັດທະນາທັກສະທີ່ສຳຄັນຫຼາຍດ້ານ ເຊັ່ນ: ການເລືອກແນວພັນ, ການຕັດແຕ່ງກິ່ງ, ການຜະລິດຝຸ່ນຄອກ ແລະ ການແປຮູບກາເຟ. ການປ່ຽນແປງດັ່ງກ່າວໄດ້ຊ່ວຍຍົກລະດັບລາຄາກາເຟໃຫ້ສູງຂຶ້ນຢ່າງຫຼວງຫຼາຍ, ເຮັດໃຫ້ລາວສາມາດສ້າງລາຍຮັບເພື່ອຊື້ເຄື່ອງໃຊ້ໃນຄອບຄົວ ແລະ ປຸກສ້າງເຮືອນໃໝ່ໄດ້.

ປັດຈຸບັນ, ທ່ານນາງມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ຜະລິດຕະພັນກາເຟ "ພູດອຍດາກຈຶງ" ທີ່ມີກິ່ນຫອມສົດຊື່ນເປັນເອກະລັກ ໄດ້ຮັບການຍອມຮັບໃນຕະຫຼາດຕ່າງປະເທດ. ສຳລັບທິດທາງໃນອະນາຄົດ, ທ່ານ ນາງ ຈ່ອຍ ມຸ່ງໝັ້ນທີ່ຈະພັດທະນາສວນກາເຟຂອງຕົນໃຫ້ກາຍເປັນກະສິກຳແບບຍືນຍົງ, ບໍ່ທຳລາຍສິ່ງແວດລ້ອມ, ກ້າວໄປສູ່ການເປັນກາເຟອໍແກນິກ (Organic) ຢ່າງເຕັມຕົວ ແລະ ສ້າງຊື່ສຽງໃຫ້ເປັນທີ່ຮູ້ຈັກຢ່າງກວ້າງຂວາງຫຼາຍຂຶ້ນ.




ທ່ານ ນາງ ຈ່ອຍ ກິມສອນຈັນ



ທ່ານ ນາງ ອ້ອມທະລາ ແສງທອງ

**ທ່ານ ນາງ ອ້ອມທະລາ ແສງທອງ**, ຜູ້ອຳນວຍຄວາມສະດວກໃນຊຸມຊົນ, ເຄີຍປະສົບກັບຄວາມຫຍຸ້ງຍາກໃນການເຮັດສວນກາເຟໃນອະດີດເນື່ອງຈາກຂາດຄວາມຮູ້ທາງດ້ານເຕັກນິກການປູກ ແລະ ການກ້າເບ້ຍ. ຢ່າງໃດກໍຕາມ, ນັບຕັ້ງແຕ່ມີໂຄງການເຂົ້າມາສະໜັບສະໜູນ, ທ່ານນາງໄດ້ຮັບການພັດທະນາທັກສະທີ່ສຳຄັນຫຼາຍດ້ານ ເຊັ່ນ: ການເລືອກແນວພັນ, ການຕັດແຕ່ງກິ່ງ, ການຜະລິດຝຸ່ນຄອກ ແລະ ການແປຮູບກາເຟ. ການປ່ຽນແປງດັ່ງກ່າວໄດ້ຊ່ວຍຍົກລະດັບລາຄາກາເຟໃຫ້ສູງຂຶ້ນຢ່າງຫຼວງຫຼາຍ, ເຮັດໃຫ້ລາວສາມາດສ້າງລາຍຮັບເພື່ອຊື້ເຄື່ອງໃຊ້ໃນຄອບຄົວ ແລະ ປຸກສ້າງເຮືອນໃໝ່ໄດ້.

ປັດຈຸບັນ, ທ່ານນາງມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ຜະລິດຕະພັນກາເຟ "ພູດອຍດາກຈຶງ" ທີ່ມີກິ່ນຫອມສົດຊື່ນເປັນເອກະລັກ ໄດ້ຮັບການຍອມຮັບໃນຕະຫຼາດຕ່າງປະເທດ. ສຳລັບທິດທາງໃນອະນາຄົດ, ທ່ານ ນາງ ອ້ອມທະລາ ມຸ່ງໝັ້ນທີ່ຈະພັດທະນາສວນກາເຟຂອງຕົນໃຫ້ກາຍເປັນກະສິກຳແບບຍືນຍົງ, ບໍ່ທຳລາຍສິ່ງແວດລ້ອມ, ກ້າວໄປສູ່ການເປັນກາເຟອໍແກນິກ (Organic) ຢ່າງເຕັມຕົວ ແລະ ສ້າງຊື່ສຽງໃຫ້ເປັນທີ່ຮູ້ຈັກຢ່າງກວ້າງຂວາງຫຼາຍຂຶ້ນ.

## ຕິດຕໍ່ພວກເຮົາໄດ້ທີ່:

**ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ**

ຫົວໜ້າ ອົງການ

ເບີໂທ: (+856) 20 5564 2235

ອີເມລ: keoamphone.souvannaphoum@care.org

**ທ່ານ ລີໄຊ ໂພທິສັດ**

ຜູ້ປະສານງານດ້ານການສື່ສານ

ເບີໂທ: (+856) 20 7777 9501

ອີເມລ: Lyxay.phothisut@care.org

ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ຕູ້ ປ.ນ 4328, ຖະໜົນໜອງສ້າງທໍ່, ບ້ານ ໜອງສ້າງທໍ່, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທ (+856-21) 217 727

ຫ້ອງການ ເຊກອງ
ເມືອງ ດາກຈຶງ, ແຂວງ ເຊກອງ, ສປປ ລາວ
ເບີໂທ (+856-38) 215 010

Lao.Info@care.org www.careint.org.la @careinlaos CARE International in Lao PDR

care®